


➢ **ປະຈຳຢູ່ ທຄຕລ ສຳນັກງານໃຫຍ່, ໜ່ວຍບໍລິການ**

**ແລະ ບັນດາສາຂາ ຂອງ ທຄຕລ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳ ທາງດ້ານການເງິນໃຫ້ແກ່ລູກຄ້າ ໂດຍໄດ້ມີການພັດທະນາບັນດາຜະລິດຕະພັນທາງການເງິນໃຫ້ມີຄວາມປອດໄພ ແລະ ທັນສະໄໝທຽບເທົ່າລະດັບສາກົນ. ປະຈຸບັນ ທຄຕລ ມີ **20** ສາຂາ ແລະ ຫຼາຍກວ່າ **90** ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນໜຶ່ງ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີຄວາມຕ້ອງການຮັບສະໝັກ ເພື່ອນຮ່ວມງານ ເພື່ອປະກອບໃຫ້ສຳນັກງານໃຫຍ່ ແລະ ສາຂາຈຳນວນໜຶ່ງ, ດັ່ງມີລາຍລະອຽດລຸ່ມນີ້:**

**1. ພະແນກຈັດຕັ້ງ-ພະນັກງານ, ຈຳນວນ 02 ຕຳແໜ່ງ**

❖ **ພະນັກງານວິຊາການສັນຫາພະນັກງານ ແລະ ພະນັກງານວິຊາການນະໂຍບາຍ ແລະ ສະຫວັດດີການພະນັກງານ**

➢ **ໜ້າທີ່ຮັບຜິດຊອບຫຼັກ**

- ຮັບຜິດຊອບວຽກງານປະກາດຮັບສະໝັກ, ສອບເສັງຄັດເລືອກພະນັກງານໃໝ່ວິຊາການ ຂອງ ທຄຕລ ທົ່ວລະບົບ;
- ຮັບຜິດຊອບວຽກງານວິເຄາະອັດຕາກຳລັງພະນັກງານ ແລະ ການກຳນົດໜ້າວຽກຕຳແໜ່ງງານ JD;
- ຮັບຜິດຊອບວຽກງານນະໂຍບາຍ ແລະ ສະຫວັດດີການຕ່າງໆໃຫ້ພະນັກງານ, ຂຽນຄູ່ມື, ລະບຽບການຕ່າງໆ ກ່ຽວກັບວຽກງານຄຸ້ມຄອງພະນັກງານ;
- ຮັບຜິດຊອບວຽກງານຄົ້ນຄວ້າ, ສຳຫຼວດ ແລະ ສ້າງແຮງຈູງໃຈໃນການເຮັດວຽກຂອງພະນັກງານ ທຄຕລ ທົ່ວລະບົບ;
- ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

➢ **ມາດຖານເງື່ອນໄຂຂອງຜູ້ສະໝັກ ທັງ 02 ຕຳແໜ່ງຂອງ ພະແນກຈັດຕັ້ງ-ພະນັກງານ**

- ເພດ: **ຊາຍ ຫຼື ຍິງ**, ອາຍຸ **21- 30 ປີ** (ເກີດລະຫວ່າງປີ **1993 ຫາ 2002**);
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ໃນສາຂາເສດຖະສາດ, ບໍລິຫານທຸລະກິດ ຫຼື ສາຂາທີ່ກ່ຽວຂ້ອງກັບວຽກງານບໍລິຫານບຸກຄະລາກອນ;
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ**;
- ຖ້າມີປະສົບການດ້ານວຽກງານສັນຫາພະນັກງານ ຫຼື ຄຸ້ມຄອງນະໂຍບາຍສະຫວັດດີການຕໍ່ກັບພະນັກງານ ຍິ່ງເປັນການດີ;
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ);
- ມີຄວາມສາມາດໃນການນຳໃຊ້ຄອມພິວເຕີ: Microsoft Word, Excel ແລະ Power Point.

## 2. ພະແນກຄົ້ນຄວ້າ, ພັດທະນາ ແລະ ຄຸ້ມຄອງສາຂາ, ຈຳນວນ 03 ຕຳແໜ່ງ

### 1) ພະນັກງານວິຊາການຄົ້ນຄວ້າ 02 ຕຳແໜ່ງ

➢ **ໜ້າທີ່ຮັບຜິດຊອບຫຼັກ**

- ຄົ້ນຄວ້າການຂະຫຍາຍໂອກາດທາງທຸລະກິດ, ການຮ່ວມມືກັບບັນດາອົງກອນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ສຶກສາຄວາມເປັນໄປໄດ້ໃນການຮ່ວມມື ພັດທະນາຜະລິດຕະພັນ ແລະ ການບໍລິການໃໝ່ ໃນການສ້າງຜົນປະໂຫຍດຮ່ວມກັນ;
- ຄົ້ນຄວ້າ ແລະ ສຶກສາຜົນໄດ້ຮັບ ຫຼື ຜົນກະທົບຂອງ ນະໂຍບາຍຕ່າງໆຂອງ ທຄຕລ ທີ່ວາງອອກໃນແຕ່ລະໄລຍະ;
- ຄົ້ນຄວ້າ ແລະ ລາຍງານກ່ຽວກັບເສດຖະກິດມະຫາພາກ ແລະ ບົດຄົ້ນຄວ້າຕາມສະພາບການປ່ຽນແປງຂອງເສດຖະກິດ - ສັງຄົມແຕ່ລະໄລຍະ;
- ຮັບຜິດຊອບທົບທວນບົດວິພາກຜະລິດຕະພັນໃໝ່ ແລະ ສຶກສາຄວາມເປັນໄປໄດ້ໃນການອອກຜະລິດຕະພັນໃໝ່ ຫຼື ປັບປຸງຜະລິດຕະພັນເກົ່າ;
- ສຶກສາທິດທາງໃນການພັດທະນາ ແລະ ສະໜອງຜະລິດຕະພັນຕ່າງໆ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງດຳເນີນການ ຂໍອະນຸມັດ;
- ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

➢ **ມາດຖານເງື່ອນໄຂຂອງຜູ້ສະໝັກຕຳແໜ່ງ ວິຊາການຄົ້ນຄວ້າ**

- ເພດ: **ຊາຍ ຫຼື ຍິງ**, ອາຍຸ **21- 30 ປີ** (ເກີດລະຫວ່າງປີ **1993 ຫາ 2002**);
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ໃນສາຂາເສດຖະສາດ, ບໍລິຫານທຸລະກິດ, ການຕະຫຼາດ, ການເງິນ-ການທະນາຄານ ແລະ ສາຂາອື່ນໆ ທີ່ກ່ຽວຂ້ອງກັບວຽກງານທະນາຄານ;
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ**;
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ);
- ມີທັກສະໃນການຄົ້ນຄວ້າ, ວິເຄາະ ແລະ ລາຍງານກ່ຽວກັບສະພາບເສດຖະກິດ;
- ເປັນຜູ້ທີ່ຊອກຮຽນຮູ້ ແລະ ມີຄວາມຄິດສ້າງສັນ;
- ສາມາດນຳໃຊ້ເຄື່ອງມືວິເຄາະ STATA, EViews ຫຼື ເຄື່ອງມືອື່ນໆ ເປັນຢ່າງດີ;
- ມີຄວາມສາມາດໃນການນຳໃຊ້ຄອມພິວເຕີ: Microsoft Word, Excel ແລະ Power Point.

### 2) ພະນັກງານວິຊາການວິສະວະກຳຂໍ້ມູນ (Data Scientist) 01 ຕຳແໜ່ງ

➢ **ໜ້າທີ່ຮັບຜິດຊອບຫຼັກ**

- ສຶກສາ, ຄົ້ນຄວ້າ, ວິໄຈຂໍ້ມູນຂະໜາດໃຫຍ່ (Big Data) ໂດຍນຳໃຊ້ເຄື່ອງມື Open Source ທີ່ທັນສະໄໝ ແລະ ຫຼັກການທາງສະຖິຕິຂອງວິທະຍາສາດຂໍ້ມູນ ເພື່ອສາມາດໃຊ້ຂໍ້ມູນຕັດສິນບັນຫາໃນການດຳເນີນທຸລະກິດ;
- ອະນາໄມຂໍ້ມູນຂີ້ເຫຍື້ອໃນລະບົບຖານຂໍ້ມູນ (data cleaning: missing values, outlier values, incorrect data, ...);
- ນຳຂໍ້ມູນໄປແຕ້ມເປັນພາບສະແດງຜົນ (Data Visualization);
- ພັດທະນາລະບົບ Machine Learning Models (Predictive Models) ດ້ວຍຫຼາກຫຼາຍ Algorithms ໃນພາສາ Python ຫຼື R;
- ອອກແບບ ແລະ ສ້າງຕາຕາລາງເກັບຂໍ້ມູນໃນລະບົບ Hadoop (Data Lake) ແລະ ໃນລະບົບ Oracle, MariaDB (RDBMS);
- ຂຽນຄຳສັ່ງ SQL ດຶງຂໍ້ມູນຈາກຫຼາຍຕາຕາລາງ ແລະ ສ້າງ View ໃນ Oracle;
- ນຳໃຊ້ Apache Airflow ຫຼື Talend Open Studio (Data Engineer Tools) ໂອນຖ່າຍຂໍ້ມູນຈາກແຕ່ລະບົບຂອງ ທຄຕລ (Data Pipeline) ເພື່ອເປັນການລວມສູນຂໍ້ມູນເຂົ້າໃນ Data Lake;
- ກວດກາ, ຕິດຕາມ ແລະ ແກ້ໄຂຂໍ້ມູນທີ່ມີບັນຫາໃນລະບົບຖານຂໍ້ມູນ ແລະ ຄວບຄຸມຄຸນະພາບຂໍ້ມູນໃນລະບົບຖານຂໍ້ມູນ;
- ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

➢ **ມາດຖານເງື່ອນໄຂຂອງຜູ້ສະໝັກ ວິຊາການວິສະວະກຳຂໍ້ມູນ**

- ເພດ: **ຊາຍ ຫຼື ຍິງ**, ອາຍຸ **21- 30 ປີ** (ເກີດລະຫວ່າງປີ **1993 ຫາ 2002**);
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ໃນສາຂາວິທະຍາສາດຄອມພິວເຕີ (Computer Science), ວິສະວະກຳຄອມພິວເຕີ (Computer Engineering), ສະຖິຕິນຳໃຊ້ທາງທຸລະກິດ (Statistic for

Business), ເຕັກໂນໂລຊີຂໍ້ມູນຂ່າວສານ (Information Technology) ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບການນໍາໃຊ້ລະບົບ ຄອມພິວເຕີ ວິເຄາະຂໍ້ມູນ (ຍົກເວັ້ນສາຂາບໍລິຫານທຸລະກິດໂອທີ);

- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ**;
- ມີຄວາມຮູ້ດ້ານວິເຄາະຂໍ້ມູນ (Data Analyst), ວິທະຍາສາດຂໍ້ມູນ (Data Science), Data Mining, AI ແລະ ເຕັກນິກການສະແດງຂໍ້ມູນ (Data Visualization – Tableau/ Power BI);
- ຮູ້ນໍາໃຊ້ຫຼາຍພາສາໂປຼແກມເພື່ອວິເຄາະຂໍ້ມູນເຊັ່ນ: SQL, Python, R;
- ຮູ້ນໍາໃຊ້ເຄື່ອງມືໃນລະບົບ Big Data ເຊັ່ນ: Apache Hadoop, Apache Spark, Apache Hive, Apache Presto ແລະ ເຄື່ອງມືອື່ນໆທີ່ກ່ຽວຂ້ອງ;
- ສາມາດນໍາໃຊ້ Python ວິເຄາະຂໍ້ມູນໄດ້ ແລະ ຮູ້ນໍາໃຊ້ຫຼາຍ Library: Pandas, NumPy, Matplotlib, Tensorflow, Keras, Scikit Learn ແລະ ອື່ນໆ;
- ຮູ້ນໍາໃຊ້ເຄື່ອງມື Apache Airflow, Apache Kafka, Apache Flume ຫຼື ອື່ນໆ;
- ມີຄວາມສາມາດໃນການນໍາໃຊ້ຄອມພິວເຕີ: Microsoft Word, Excel ແລະ Power Point;
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).

## 3. ພະແນກກວດກາພາຍໃນ, ຈໍານວນ 05 ຕໍາແໜ່ງ

❖ **ຕໍາແໜ່ງ ພະນັກງານວິຊາການກວດກາພາຍໃນ**

➢ **ໜ້າທີ່ຮັບຜິດຊອບຫຼັກ**

- ລົງກວດກາບັນດາພະແນກ, ສູນ, ສາຂາ, ບັນດາຂະແໜງການ ແລະ ໜ່ວຍບໍລິການທີ່ຂຶ້ນກັບສາຂາທີ່ຕົນຮັບຜິດຊອບຕາມການມອບໝາຍຕາມການມອບໝາຍ (ກວດກາປົກກະຕິ, ສຸກເສີນ ແລະ ກວດກາຕາມທິດຊີ້ນໍາ);
- ຮັບຜິດຊອບໃນການຕິດຕາມບັນດາພະແນກ, ສູນ, ສາຂາ, ບັນດາຂະແໜງການ ແລະ ໜ່ວຍບໍລິການທີ່ຂຶ້ນກັບສາຂາທີ່ຕົນຮັບຜິດຊອບຕາມການມອບໝາຍ ຫຼື ຕາມການແບ່ງງານ;
- ສັງລວມ, ຕິດຕາມປະກົດການຫຍໍ້ທໍ້ ແລະ ການຕໍານິສິ່ງຂ່າວພົນລະເມືອງທາງກ້ອງຄໍາຄິດເຫັນ;
- ສັງລວມ ແລະ ຕິດຕາມການແກ້ໄຂຂໍ້ພົບເຫັນຂອງພາກສ່ວນທີ່ຕົນຮັບຜິດຊອບ;
- ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

➢ **ມາດຖານເງື່ອນໄຂຂອງຜູ້ສະໝັກ ວິຊາການກວດກາພາຍໃນ**

- ເພດ: **ຊາຍ ຫຼື ຍິງ**, ອາຍຸ **21- 30 ປີ** (ເກີດລະຫວ່າງປີ **1993 ຫາ 2002**);
- ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ໃນສາຂາການກວດສອບ, ເສດຖະສາດ, ບໍລິຫານທຸລະກິດ, ການຕະຫຼາດ, ການເງິນ-ການທະນາຄານ, ການບັນຊີ ແລະ ສາຂາອື່ນໆ ທີ່ກ່ຽວຂ້ອງກັບວຽກງານທະນາຄານ;
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ**,
- ຖ້າມີປະສົບການທີ່ຕິດພັນກັບວຽກງານກວດສອບ ຍິ່ງເປັນການດີ;
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ);
- ມີຄວາມສາມາດໃນການນໍາໃຊ້ຄອມພິວເຕີ: Microsoft Word, Excel ແລະ Power Point.

## 4. ພະແນກບໍລິຫານຊັບສິນ ແລະ ແກ້ໄຂໜີ້ສິນ 01 ຕໍາແໜ່ງ

➢ **ໜ້າທີ່ຮັບຜິດຊອບຫຼັກ**

- ລົງພົບລູກຄ້າ ຫຼື ເຊີນລູກຄ້າ ເພື່ອເຈລະຈາຕໍ່ລອງການແກ້ໄຂໜີ້ຮ່ວມກັນຈຸດປະສົງເພື່ອເຮັດໃຫ້ການແກ້ໄຂໜີ້ບັນລຸຕາມເປົ້າໝາຍທີ່ກໍານົດໄວ້;
- ຕິດຕາມຄຸ້ມຄອງລູກຄ້າທີ່ຕົນເອງຮັບຜິດຊອບຢ່າງເປັນປະຈໍາ ພ້ອມທັງລາຍງານຄວາມຄືບໜ້າການແກ້ໄຂໜີ້ເພື່ອລາຍງານຕໍ່ຄະນະບໍລິຫານງານຮັບຊາບຢ່າງເປັນປົກກະຕິ;
- ປະສານກັບໜ່ວຍງານພາກລັດ ແລະ ອົງການທີ່ມີສິດອໍານາດທາງກົດໝາຍ ເພື່ອເຮັດໃຫ້ການແກ້ໄຂໜີ້ທີ່ຕິດພັນກັບການຮ້ອງຟ້ອງ ມີຄວາມຄ່ອງຕົວຕາມຂັ້ນຕອນຂອງລະບຽບກົດໝາຍ;
- ສັງລວມຕົວເລກການແກ້ໄຂໜີ້ສິນ ປະຈໍາອາທິດ, ເດືອນ, ໄຕມາດ ແລະ ປະຈໍາປີ ເພື່ອລາຍງານໃຫ້ຄະນະບໍລິຫານງານຮັບຊາບ;
- ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

➢ **ມາດຖານເງື່ອນໄຂຂອງຜູ້ສະໝັກຂອງ ພະແນກບໍລິຫານຊັບສິນ ແລະ ແກ້ໄຂໜີ້ສິນ**

– ເພດ: **ຊາຍ ຫຼື ຍິງ**, ອາຍຸ **21- 30 ປີ** (ເກີດລະຫວ່າງປີ **1993 ຫາ 2002**);
– ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ໃນສາຂາເສດຖະສາດ, ບໍລິຫານທຸລະກິດ, ການຕະຫຼາດ, ການເງິນ-ການທະນາຄານ, ກົດໝາຍ (ແພ່ງ, ອາຍາ, ທຸລະກິດ, ການຄ້າ, ເສດຖະກິດ) ແລະ ສາຂາອື່ນໆ ທີ່ກ່ຽວຂ້ອງກັບວຽກງານທະນາຄານ;
– ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ**;
– ຖ້າມີປະສົບການດ້ານສິນເຊື່ອມາກ່ອນຍິ່ງເປັນການດີ;
– ມີປະສົບການໃນການດຳເນີນຄະດີ, ການໄກ່ເກ່ຍຂັ້ນບ້ານ ຍິ່ງເປັນການດີ;
– ມີທັກສະສູງໃນການເຈລະຈາຕໍ່ລອງ ຍິ່ງເປັນການດີ;
– ມີຄວາມສາມາດໃນການນຳໃຊ້ Advanced Excel Function & Formulas ຍິ່ງເປັນການດີ;
– ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).

## 5. ພະແນກບັນຊີສັງລວມ ຈຳນວນ 01 ຕຳແໜ່ງ

➢ **ໜ້າທີ່ຮັບຜິດຊອບຫຼັກ**

– ຮັບຜິດຊອບລອກກ່າຍບັນຊີເງິນຝາກລະຫວ່າງທະນາຄານພາຍໃນ ແລະ ຕ່າງປະເທດ ຂອງ ທຄຕລ ທີ່ວລະບົບ ແລ້ວສົ່ງລາຍງານການລອກກ່າຍເປັນປະຈຳວັນໃຫ້ພາກສ່ວນກ່ຽວຂ້ອງໃຫ້ທັນສະພາບການ;
– ຮັບຜິດຊອບລອກກ່າຍບັນຊີລ່ວງໜ້າ-ລໍຖ້າ, ບັນຊີຄ້າງຮັບ-ຈ່າຍ,ບັນຊີເງິນຝາກລະຫວ່າງທະນາຄານ, ແລະ ບັນຊີນອກໃບລາຍງານຖານະການເງິນ; ກວດຄືນການຄິດໄລ່ດອກເບ້ຍຄ້າງຮັບ-ຄ້າງຈ່າຍທີ່ວລະບົບ;
– ເປັນເຈົ້າການຕິດຕາມ ແລະ ແກ້ໄຂບັນຫາຕ່າງໆທີ່ຕິດຕາມວຽກລອກກ່າຍບັນຊີຂອງແຕ່ລະພະແນກການ ແລະ ບັນດາສາຂາທີ່ຕົນຮັບຜິດຊອບ;
– ສັງລວມຄວາມຜິດໃນການກວດຕິດຕາມບັນຊີລອກກ່າຍຂອງພະແນກ, ສູນ ແລະ ສາຂາ ເພື່ອລາຍງານພາກສ່ວນກ່ຽວຂ້ອງ ເປັນປະຈຳອາທິດ ແລະ ເປັນປະຈຳເດືອນ;
– ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

## 6. ພະແນກຄັງເງິນສົດ ຈຳນວນ 05 ຕຳແໜ່ງ

➢ **ໜ້າທີ່ຮັບຜິດຊອບຫຼັກ**

– ໃຫ້ບໍລິການທົ່ວໄປຂອງທະນາຄານ ແລະ ບໍລິການຮັບ-ຈ່າຍເງິນສົດ ປະຈຳວັນໃຫ້ແກ່ລູກຄ້າພ້ອມທັງຮັບປະກັນການກວດເອກະສານ, ສະຫຼຸບບັນຊີຮັບ-ຈ່າຍເງິນສົດປະຈຳວັນ;
– ຮັບຜິດຊອບຄັດແຍກສະກຸນເງິນຕາຕ່າງໆ ຕາມການມອບໝາຍ ເປັນຕົ້ນແມ່ນເງິນບາດ ແລະ ໂດລາ ທີ່ເຄື່ອນຍ້າຍມາຈາກ ທຫລ, ສາຂາ ແລະ ໜ່ວຍບໍລິການ;
– ຮັບຜິດຊອບອອກສະໜອງເງິນສົດເຂົ້າຕູ້ ATM ພ້ອມທັງເຄື່ອນຍ້າຍ ແລະ ຄິດໄລ່ເງິນສົດເຂົ້າ-ອອກ ຕູ້ ATM ແລະ ຕູ້ຝາກເງິນ CDM ໃຫ້ຖືກຕ້ອງຕາມລະບຽບຫຼັກການ; ຮັບຜິດຊອບກະກຽມເງິນສົດໃສ່ກະແຊັດສຳຮອງໄວ້ສະໜອງໃສ່ຕູ້ ATM;
– ຮັບຜິດຊອບເຄື່ອນຍ້າຍເງິນສົດພາຍໃນພະແນກ ແລະ ຮັບ-ຈ່າຍເງິນສົດ ໃຫ້ Teller;
– ກວດນັບເງິນສົດ, ລ້າງຕູ້ຝາກເງິນ (ຫຼື ເອົາເງິນສົດອອກຈາກຕູ້ເງິນຝາກ) ບັນທຶກບັນຊີປະຈໍວັນ ທີ່ຕິດພັນກັບລາຍການເຕີມຕູ້-ເຄຼຍຕູ້ ແລະ ບັນທຶກຈົດກ່າຍບັນຊີໃຫ້ຖືກຕ້ອງຕາມຫຼັກການ ພ້ອມທັງສະຫຼຸບບັນຊີປະຈຳ;
– ບໍລິການຮັບເງິນສົດນອກສະຖານທີ່ກັບລູກຄ້າຕາມສັນຍາ ແລະ ຕາມການມອບໝາຍ;
– ຄຸ້ມຄອງຮັກສາ ແລະ ບົວລະບັດເຄື່ອງຈັກ ແລະ ອຸປະກອນການປະຕິບັດວຽກງານ;
– ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

**7. ຕຳແໜ່ງ ພະນັກງານວິຊາການ Teller ປະຈຳຢູ່**

- **ໜ່ວຍບໍລິການໄຊສົມບູນ 01 ຕຳແໜ່ງ**
- **ສາຂານະຄອນຫຼວງວຽງຈັນ 03 ຕຳແໜ່ງ**
- **ສາຂາໄຊຍະບູລີ 02 ຕຳແໜ່ງ**
- **ສາຂາຊຽງຂວາງ 01 ຕຳແໜ່ງ**
- **ສາຂາວັງວຽງ 02 ຕຳແໜ່ງ**
- **ສາຂາຜົ້ງສາລີ 02 ຕຳແໜ່ງ**

➢ **ໜ້າທີ່ຮັບຜິດຊອບຫຼັກ**

– ໃຫ້ຂໍ້ມູນ ແລະ ບໍລິການແກ່ລູກຄ້າຜ່ານປ່ອງບໍລິການ ເປັນຕົ້ນແມ່ນ ການເປີດບັນຊີໃໝ່, ການເຮັດທຸລະກຳຝາກ, ຖອນ, ໂອນ, ການຮັບ-ຈ່າຍເງິນສົດປະຈຳວັນ ແລະ ທຸກການບໍລິການຂອງ ທຄຕລ;
– ໃຫ້ບໍລິການ ແລະ ແກ້ໄຂບັນຫາກ່ຽວກັບທຸກທຸລະກຳ/ການນຳໃຊ້ຜະລິດຕະພັນຕ່າງໆຂອງ ທຄຕລ;
– ດຳເນີນວຽກງານຕ່າງໆ ທີ່ຕິດພັນກັບເງິນສົດ ແລະ ການບໍລິການຂອງ ທຄຕລ;
– ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

➢ **ມາດຖານເງື່ອນໄຂຂອງຜູ້ສະໝັກ ສຳລັບຕຳແໜ່ງຂອງ ພະແນກບັນຊີສັງລວມ, ພະແນກຄັງເງິນສົດ ແລະ ພະນັກງານ Teller ປະຈຳຢູ່ໜ່ວຍບໍລິການ ແລະ ບັນດາສາຂາຕ່າງໆ**

– ເພດ: **ຊາຍ ຫຼື ຍິງ**, ອາຍຸ **21- 30 ປີ** (ເກີດລະຫວ່າງປີ **1993 ຫາ 2002**);
– ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ໃນສາຂາເສດຖະສາດນຳໃຊ້, ເສດຖະສາດລະຫວ່າງປະເທດ, ການຄ້າ, ການຄ້າອີເລັກໂຕຼນິກ, ບໍລິຫານທຸລະກິດ, ການຕະຫຼາດ, ບັນຊີການເງິນ, ການເງິນ, ການທະນາຄານ, ການເງິນຈຸລະພາກ, ການເງິນວິສາຫະກິດ ແລະ ສາຂາອື່ນໆ ທີ່ກ່ຽວຂ້ອງກັບວຽກງານທະນາຄານ;
– ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ;**
– ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ);
– ມີຄວາມສາມາດໃນການນຳໃຊ້ຄອມພິວເຕີ: Microsoft Word, Excel ແລະ Power Point.

**8. ຕຳແໜ່ງ ພະນັກງານວິຊາການພັດທະນາໂປຼແກຼມ ຈຳນວນ 07 ຕຳແໜ່ງ ປະກອບໃຫ້**

- **ສູນໄອທີ ແລະ ສູນບັດ**

➢ **ໜ້າທີ່ຮັບຜິດຊອບຫຼັກ**

– ພັດທະນາໂປຼແກຼມຮັບໃຊ້ພາຍໃນ ແລະ ພາຍນອກ ທຄຕລ ຕາມການແບ່ງຄວາມຮັບຜິດຊອບ;
– ເປັນເຈົ້າການຄົ້ນຄວ້າພັດທະນາ ແລະ ຄຸ້ມຄອງໂປຼແກຼມທີ່ສ້າງຂຶ້ນເພື່ອຮັບໃຊ້ວຽກງານພາຍໃນ ທຄຕລ;
– ພັດທະນາ ຕິດຕາມ ແລະ ແກ້ໄຂບັນຫາລະບົບ ເພື່ອຮອງຮັບການສ້າງຜະລິດຕະພັນ ແລະ ການບໍລິການໃໝ່ໆ;
– ພັດທະນາ ແລະ ປັບປຸງລະບົບທີ່ມີຢູ່ແລ້ວໃຫ້ດີຂຶ້ນຕື່ມ;
– ອອກແບບລະບົບຜະລິດຕະພັນ ແລະ ບຳລຸງຮັກສາ ຄຸ້ມຄອງຜະລິດຕະພັນໃຫ້ສາມາດດຳເນີນໄປໄດ້ຢ່າງປົກກະຕິ;
– ກວດສອບ ແລະ ທົດລອງຜະລິດຕະພັນກ່ອນຈະມີການເປີດໃຫ້ບໍລິການ;
– ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້.

➢ **ມາດຖານເງື່ອນໄຂຂອງຜູ້ສະໝັກ ຂອງວິຊາການພັດທະນາໂປຼແກຼມ**

– ເພດ: **ຊາຍ ຫຼື ຍິງ**, ອາຍຸ **21-30 ປີ** (ເກີດລະຫວ່າງປີ **1993-2002**);
– ລະດັບການສຶກສາ: **ຮຽນຈົບປະລິນຍາຕີຂຶ້ນໄປ** ໃນສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ, ສາຂາການພັດທະນາໂປຣແກຣມຄອມພິວເຕີ, ສາຂາການພັດທະນາເວັບໄຊ ແລະ ອື່ນໆທີ່ກ່ຽວຂ້ອງກັບໄອທີ (ຍົກເວັ້ນສາຂາບໍລິຫານທຸລະກິດໄອທີ);
– ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ;**
– ມີຄວາມຮູ້ໃນພາສາໂປຼແກມໃດໜຶ່ງເຊັ່ນ: Java, C#, Nodejs, Python;
– ມີຄວາມຊຳນານໃນພາສາການສ້າງເວັບໄຊໃດໜຶ່ງເຊັ່ນ: PHP, JavaScript, CSS, HTML;
– ຮູ້ນຳໃຊ້ຂໍ້ມູນໃດໜຶ່ງເຊັ່ນ: MySQL, SQL Server, Oracle;
– ຮູ້ນຳໃຊ້ Framework ໃດໜຶ່ງເຊັ່ນ: Angular, Vue.js, React, Flutter;
– ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).

**9. ຕຳແໜ່ງ ພະນັກງານວິຊາການເຕັກນິກຕິດຕັ້ງ ແລະ ສ້ອມແປງ (IT Support) ຈຳນວນ 03 ຕຳແໜ່ງ ປະຈຳ**

- **ສາຂານະຄອນຫຼວງວຽງຈັນ 01 ຕຳແໜ່ງ**
- **ສາຂາຫຼວງພະບາງ 01 ຕຳແໜ່ງ**
- **ສາຂາບໍລິຄຳໄຊ 01 ຕຳແໜ່ງ**

➢ **ໜ້າທີ່ຮັບຜິດຊອບຫຼັກ**

- ອຳນວຍຄວາມສະດວກ, ຕິດຕັ້ງ ແລະ ແກ້ໄຂບັນຫາດ້ານໄອທີໃຫ້ແກ່ທຸກພາກສ່ວນໃນອົງກອນ
- ຄຸ້ມຄອງດູແລລະບົບຄວາມປອດໄພ ພາຍໃນອາຄານ ທີ່ຕິດພັນກັບໄອທີຢ່າງສະໝ່ຳສະເໝີ ແລະ ຮັບປະກັນການປະຕິບັດງານຕະຫຼອດ 24 ຊົ່ວໂມງ ແລະ ການຈັດເກັບຂໍ້ມູນໃຫ້ມີປະສິດທິພາບ ແລະ ຄົບຖ້ວນເຊັ່ນ: ຂໍ້ມູນລະບົບກ້ອງວົງຈອນປິດ CCTV ເປັນຕົ້ນ
- ຕິດຕັ້ງສ້ອມແປງ ແລະ ບຳລຸງຮັກສາ ເຄື່ອງອຸປະກອນໄອທີ, ຕິດຕັ້ງເຄື່ອງອຸປະກອນໄອທີ ລວມເຖິງວຽກງານອື່ນ ທີ່ຕິດພັນກັບອຸປະກອນໄອທີ ທີ່ເປ່ເພ
- ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍໃຫ້

➢ **ມາດຖານເງື່ອນໄຂຂອງຜູ້ສະໝັກ ຂອງວິຊາການ IT Support**

- ເພດ: **ຊາຍ,** ອາຍຸ **21- 30** ປີ (ເກີດລະຫວ່າງ **1993-2002**).
- ລະດັບການສຶກສາ: ຮຽນຈົບປະລິນຍາຕີຂຶ້ນໄປ ສາຂາວິສະວະກຳອີເລັກໂຕຼນິກ, ວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອື່ນໆທີ່ກ່ຽວຂ້ອງກັບໄອທີ (ຍົກເວັ້ນສາຂາບໍລິຫານທຸລະກິດໄອທີ);
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ)
- ຄະແນນສະເລ່ຍຮຽນຈົບ **CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ;**
- ມີຄວາມຮູ້ກ່ຽວກັບການຕິດຕັ້ງ, ສ້ອມແປງ ແລະ ແກ້ໄຂບັນຫາອຸປະກອນໄອທີ Hardware ຕ່າງໆໄດ້ເຊັ່ນ: ເຄື່ອງຄອມພິວເຕີ, PC, Notebook, Printers, Servers, ລະບົບກ້ອງວົງຈອນປິດ, ລະບົບເຕືອນໄພ, ລະບົບ Access Control ແລະ ອຸປະກອນໄອທີອື່ນໆ;
- ມີຄວາມສາມາດຕິດຕັ້ງ ແລະ ແກ້ໄຂບັນຫາລະບົບປະຕິບັດການ Windows, Open source ແລະ Application Software Program ຕ່າງໆໄດ້, ມີຄວາມຮູ້ດ້ານການຕິດຕັ້ງລະບົບເຄືອຂ່າຍພາຍໃນ-ພາຍນອກ, ສາມາດເດີນລະບົບສາຍຕ່າງໆ ພາຍໃນອາຄານບໍ່ວ່າຈະເປັນສາຍໄຟຟ້າ, ສາຍເຄືອຂ່າຍ, ສາຍກ້ອງວົງຈອນປິດ;
- ສາມາດນຳໃຊ້ອຸປະກອນເຄື່ອງການຊ່າງ ແລະ ມີຄວາມຮູ້ທາງດ້ານລະບົບໄຟຟ້າອີເລັກໂຕຼນິກຍິ່ງເປັນການດີ.

▪ **ໝາຍເຫດ: ສຳລັບຜູ້ທີ່ໄດ້ສະໝັກຕຳແໜ່ງ ພະນັກງານວິຊາການເຕັກນິກຕິດຕັ້ງ ແລະ ສ້ອມແປງ (IT Support) ຂອງ ສາຂາຫຼວງພະບາງ ໄວ້ແລ້ວ ແມ່ນບໍ່ຈຳເປັນຕ້ອງສະໝັກອີກ ເນື່ອງຈາກໄດ້ມີຂໍ້ມູນແລ້ວ.**

- **ຄຸນລັກສະນະເພີ່ມຕື່ມຂອງຜູ້ສະໝັກແຕ່ລະຕຳແໜ່ງງານ**

- ຜູ້ສະໝັກຕ້ອງເປັນຄົນສັນຊາດລາວ, ມີສຸຂະພາບແຂງແຮງດີ.
- ມີຄວາມຊື່ສັດບໍລິສຸດ, ມະນຸດສຳພັນດີ, ບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ.
- ລະອຽດຮອບຄອບ, ມີລະບຽບວິໄນ ແລະ ມີຄວາມຮັບຜິດຊອບສູງ.
- ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ຜູ້ສະໝັກຕ້ອງ "**ບໍ່ແມ່ນພະນັກງານລັດຖະກອນ**" ຂອງອົງການຈັດຕັ້ງລັດ, ຖ້າຫາກການຈັດຕັ້ງຫາກສືບຮູ້ພາຍຫຼັງວ່າໄດ້ມີການໃຫ້ຂໍ້ມູນທີ່ບໍ່ເປັນຄວາມຈິງແມ່ນຈະຖືກຕັດສິດ ແລະ ບໍ່ໄດ້ຮັບການພິຈາລະນາ.
- ບໍ່ເຄີຍກະທຳຄວາມຜິດທຸກກໍລະນີທີ່ຜິດກົດໝາຍຂອງ ສປປ ລາວ ຫຼື ຢູ່ໃນຂັ້ນຕອນການດຳເນີນຄະດີໃດໜຶ່ງ.
- ບໍ່ເຄີຍຖືກໄລ່ອອກ ຫຼື ປະລະໜ້າທີ່ຈາກອົງກອນໃດໜຶ່ງມາກ່ອນ.
- ສາມາດເຮັດວຽກພາຍໃຕ້ຄວາມກົດດັນ, ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.
- ສາມາດເຮັດວຽກນອກໂມງການ, ວັນພັກລັດຖະການ ແລະ ສາມາດໄປວຽກຕ່າງແຂວງໄດ້.
- ຜູ້ສະໝັກບໍ່ຈຳເປັນຕ້ອງເປັນຄົນທ້ອງຖິ່ນໃນເຂດດັ່ງກ່າວ ກໍສາມາດສະໝັກໄດ້ ແຕ່ຕ້ອງຍອມຮັບເງື່ອນໄຂໃນການຍົກຍ້າຍ, ສັບຊ້ອນ ໄປປະຈຳການຢູ່ບັນດາສາຂາອື່ນໄດ້ ຕາມການຈັດຕັ້ງມອບໝາຍ.
- ມີໃຈຮັກໃນວຽກງານບໍລິການ, ວຽກງານທະນາຄານ ແລະ ວຽກງານທີ່ການຈັດຕັ້ງມອບໝາຍໃຫ້.

**<u>ວິທີສະໝັກວຽກ:</u>** ***<u>ການສະໝັກແມ່ນອອນລາຍຜ່ານເວັບໄຊຂອງ ທຄຕລ ເທົ່ານັ້ນ</u>***, **ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈທີ່ຈະສະໝັກວຽກ ແມ່ນໃຫ້ອ່ານລາຍລະອຽດຂອງແຕ່ລະຕຳແໜ່ງງານ ແລະ ປະຕິບັດຕາມຂັ້ນຕອນລຸ່ມນີ້:**

1) ເຂົ້າໄປປະກອບແບບຟອມສະໝັກທາງອອນລາຍໄດ້ທີ່ ເວັບໄຊຂອງ ທຄຕລ **www.bcel.com.la** > ສະໝັກວຽກ > ສະໝັກວຽກກັບ BCEL > ເລືອກຕຳແໜ່ງທີ່ຕົນເອງຕ້ອງການສະໝັກ > ຈາກນັ້ນປະກອບຂໍ້ມູນຂອງຕົນລົງແບບຟອມ.

- ສຳລັບການປະກອບຂໍ້ມູນຂອງຜູ້ສະໝັກລົງໃນແບບຟອມ ຕ້ອງລະບຸທຸກຂໍ້ມູນໃຫ້ຄົບຖ້ວນຕາມແບບຟອມກຳນົດ ໂດຍສະເພາະອີເມວ ແລະ ເບີໂທຂອງຜູ້ສະໝັກຈະຕ້ອງເປັນອີເມວ ແລະ ເບີໂທທີ່ນຳໃຊ້ປະຈຸບັນ ແລະ ເປີດນຳໃຊ້ປົກກະຕິ.
- **ເອກະສານທີ່ມີຄວາມຈຳເປັນໃນເບື້ອງຕົ້ນທີ່ຕ້ອງປະກອບລົງໃນແບບຟອມສະໝັກອອນລາຍມີ: (ເອກະສານຕ້ອງເປັນຮູບແບບຟາຍ PDF ເທົ່ານັ້ນ)**

1. ເອກະສານຢັ້ງຢືນຕົວຕົນ (ບັດປະຈຳຕົວ, ສຳມະໂນຄົວ ຫຼື Passport) ຢ່າງໃດຢ່າງໜຶ່ງ ທີ່ຍັງບໍ່ໝົດອາຍຸນຳໃຊ້
2. ໃບປະກາດວິຊາສະເພາະ ແລະ ໃບຄະແນນ
3. ສຳລັບ "**ຜູ້ທີ່ສຳເລັດການສຶກສາແລ້ວ ແຕ່ຍັງບໍ່ໄດ້ຮັບໃບປະກາດ (ລໍຖ້າຮັບໃບປະກາດ)**" ແມ່ນສາມາດສະໝັກໄດ້ໂດຍນຳໃຊ້ **ໃບຢັ້ງຢືນສຳເລັດການສຶກສາ (ໂດຍມີການລະບຸວ່າ ໄດ້ສຳເລັດການປ້ອງກັນບົດ ຫຼື ສອບເສັງຈົບຊັ້ນແລ້ວ) ທີ່ບໍ່ແມ່ນໃບຢັ້ງຢືນການເປັນນັກສຶກສາ** ພ້ອມດ້ວຍ ໃບຄະແນນ
4. ໃບຢັ້ງຢືນການເຂົ້າຮ່ວມການຝຶກອົບຮົມຕ່າງໆ ທີ່ເຫັນວ່າກ່ຽວຂ້ອງກັບໜ້າວຽກ **(ຖ້າມີ)**
5. ໃບຢັ້ງຢືນລະດັບພາສາຕ່າງປະເທດໃດໜຶ່ງ ເຊັ່ນ: ພາສາອັງກິດ, ພາສາຈີນ ຫຼື ພາສາຫວຽດນາມ ແລະ ອື່ນໆ **(ຖ້າມີ)**

➢ **ສ່ວນເອກະສານອື່ນໆ ທີ່ບໍ່ໄດ້ລະບຸ ແມ່ນບໍ່ຈຳເປັນຕ້ອງອັບໂຫຼດລົງແບບຟອມ ຊຶ່ງຜູ້ສະໝັກຈະໄດ້ປະກອບມາພາຍຫຼັງສອບເສັງ ແລະ ຖືກຄັດເລືອກເຂົ້າເປັນພະນັກງານແລ້ວ.**

2) ຜູ້ສະໝັກທີ່ໄດ້ປະກອບຂໍ້ມູນຕ່າງໆໃນແບບຟອມສະໝັກທາງອອນລາຍ ສຳເລັດ ແລະ ຄົບຖ້ວນ ຈະໄດ້ຮັບອີເມວແຈ້ງລະຫັດຈາກ ທຄຕລ ແຕ່ຖ້າບໍ່ໄດ້ຮັບການແຈ້ງລະຫັດຈາກ ທຄຕລ ແມ່ນໝາຍເຖິງສະໝັກບໍ່ສຳເລັດ ຫຼື ລະບົບມີການ Reject ອັດຕະໂນມັດ ຊຶ່ງສາມາດຕິດຕໍ່ສອບຖາມເພີ່ມຕື່ມໄດ້ກັບພະແນກຈັດຕັ້ງ-ພະນັກງານຕາມລາຍລະອຽດຂໍ້ທີ **7.**

3) ຜູ້ສະໝັກ 01 ຄົນ ສາມາດສະໝັກໄດ້ 01 ຕຳແໜ່ງ ເທົ່ານັ້ນ, ຫາກພົບເຫັນລາຍຊື່ຢູ່ໃນຫຼາຍຕຳແໜ່ງ, ທຄຕລ ຂໍສະຫງວນສິດເລືອກຕຳແໜ່ງທີ່ຜູ້ສະໝັກໄດ້ສົ່ງຟອມອອນລາຍເປັນອັນທຳອິດ ອີງຕາມວັນເວລາທີ່ໄດ້ປະກອບຟອມອອນລາຍ.

4) ຜູ້ສະໝັກຈະຕ້ອງເອົາໃຈໃສ່ໃນການບັນທຶກ ຫຼື ຈື່ຈຳ ລະຫັດຂອງຕົນເອງຢ່າງລະອຽດ ເນື່ອງຈາກ ທຄຕລ ຈະແຈ້ງຂໍ້ມູນຜູ້ສະໝັກທີ່ຜ່ານການຄັດເລືອກໃຫ້ເຂົ້າສອບເສັງ ເປັນລະຫັດປະຈຳຕົວຂອງນັກສອບເສັງເທົ່ານັ້ນ (ຈະບໍ່ໄດ້ແຈ້ງຊື່ ແລະ ນາມສະກຸນນັກສອບເສັງ).

5) **ກຳນົດເວລາໃນການເປີດ-ປິດຮັບສະໝັກ:**

- ເປີດຮັບສະໝັກ ***<u>ອອນລາຍ ຜ່ານທາງເວັບໄຊ ທຄຕລ</u>*** ນັບແຕ່ວັນທີ ***<u>02-15/10/2023</u>***
- ສຳລັບຜູ້ທີ່ຜ່ານ ຫຼື ບໍ່ຜ່ານເງື່ອນໄຂ ເພື່ອເຂົ້າຮອບສອບເສັງ ທາງ ທຄຕລ ຈະແຈ້ງໃຫ້ຊາບຜ່ານອີເມວ ທີ່ຜູ້ສະໝັກໄດ້ໃຊ້ໃນການສະໝັກອອນລາຍ ແລະ ຈະແຈ້ງວັນເວລາ, ສະຖານທີ່ສອບເສັງຕື່ມຕາມພາຍຫຼັງ (ແຈ້ງເປັນລະຫັດທີ່ຜູ້ສະໝັກໄດ້ຮັບ).

6) ຜູ້ສະໝັກຄົນໃດທີ່ໄດ້ປອມແປງເອກະສານເພື່ອການສະໝັກ, ຫາກສືບຮູ້ພາຍຫຼັງວ່າໄດ້ມີການໃຫ້ຂໍ້ມູນທີ່ບໍ່ເປັນຄວາມຈິງແມ່ນຈະຖືກຕັດສິດບໍ່ໄດ້ຮັບການພິຈາລະນາເປັນພະນັກງານຂອງ ທຄຕລ ແລະ ຖືກດຳເນີນຄະດີຕາມກົດໝາຍ.

7) ລາຍລະອຽດເພີ່ມເຕີມສາມາດສອບຖາມໄດ້ທີ່ ພະແນກຈັດຕັ້ງ-ພະນັກງານ ໂທ: 021 213200-417 ຫຼື 418.

ນະຄອນຫຼວງວຽງຈັນ, ວັນທີ 27/09/2023

**ຮ. ຫົວໜ້າພະແນກ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ພະແນກຈັດຕັ້ງ-ພະນັກງານ

ຄຳສະຫວັນ ອຸດທະຈັກ